II ຂ.2 **ກະຊວງສະໜອງວັດຖຸ-ເຕັກນິກ**

ກະຊວງສະໜອງວັດຖຸ-ເຕັກນິກ ແມ່ນກະຊວງໜຶ່ງທີ່ສ້າງຕັ້ງຂຶ້ນໃໝ່ໂດຍມີ ທ່ານ ທອງສຸກ ສາຍສັງຄີ ເປັນລັດຖະມົນຕີວ່າການ ແລະ ມີຮອງລັດຖະມົນຕີຈຳນວນໜຶ່ງໃຫ້ການຊີ້ນຳ, ນຳພາວຽກງານຄຸ້ມຄອງວັດຖຸ-ເຕັກນິກ.

ໂຄງປະກອບການຈັດຕັ້ງຂອງກະຊວງ ສະໜອງວັດຖຸ-ເຕັກນິກ (1982-88) ປະກອບດ້ວຍ: 1 ຫ້ອງການ, 15 ກົມ ຄື ກົມຈັດຕັ້ງ, ກົມແຜນການ, ກົມສະໜອງວັດຖຸກໍ່ສ້າງ, ກົມນ້ຳມັນເຊື້ອໄຟ, ກົມກໍ່ສ້າງພື້ນຖານ, ກົມກຳນົດໝາຍ, ກົມພົວພັນຕ່າງປະເທດ, ກົມສະໜອງອຸປະກອນເຕັກນິກ, ກົມສະໜອງວັດຖຸດິບແລະອື່ນໆ, ກົມບັນຊີ, ກົມຄຸ້ມຄອງ, ກົມກົນຈັກ, ກົມສະໜອງອຸປະກອນເຕັກນິກໃຫ້ກະຊວງ ວັດທະນະທຳ, ກົມສະໜອງວັດຖຸເຕັກນິກໃຫ້ກະຊວງກໍ່ສ້າງ, ກົມຂົນສົ່ງນ້ຳມັນ ແລ້ວກໍຍັງມີບໍລິສັດນ້ຳມັນເຊື້ອໄຟ, ກອງ 78, ສາງດານັງ, ກອງຂົນສົ່ງນ້ຳມັນ, ສາງຫລັກ 7, ບໍລິສັດສະໜອງວັດຖຸກໍ່ສ້າງ. ກົງຈັກການຈັດຕັ້ງຂອງກະຊວງສະໜອງວັດຖຸ-ເຕັກນິກເປັນກະຊວງໃຫຍ່ກວ່າກະຊວງກໍ່ ສ້າງຊຶ່ງປະກອບດ້ວຍ 1 ຫ້ອງການ ແລະ 15 ກົມ. ການປະກອບພະນັກງານເຂົ້າໃນກົງຈັກເຫລົ່ານີ້ ສ່ວນໜຶ່ງ ກໍແມ່ນມາຈາກກະຊວງຄົມມະນາຄົມ ໂຍທາ ແລະ ຂົນສົ່ງ; ອີກສ່ວນໜຶ່ງ ກໍມາຈາກກະຊວງ ອື່ນໆ ເປັນຕົ້ນແມ່ນກະຊວງອຸດສາຫະກຳ ແລະ ການຄ້າ.

ການສະໜອງນ້ຳມັນ ໃນໄລຍະຊຸມປີທຳອິດຂອງລະບອບໃໝ່ ຍັງບໍ່ທັນເປັນລະບົບປົກກະຕິດີເທົ່າທີ່ຄວນບາງຄັ້ງກໍສະໜອງຢ່າງເປັນປົກກະຕິ, ບາງຄັ້ງກໍຂາດໆເຂີນໆ. ພັກ ແລະ ລັດຈຶ່ງຕັດສິນໃຈໃຫ້ສ້າງລະບົບທໍ່ສົ່ງຈາກ ສສ ຫວຽດນາມ ເຂົ້າມາຫາດິນແດນ ສປປ ລາວ ໂດຍຜ່ານແຂວງຄຳມ່ວນ. ການສ້າງສາງເກັບນ້ຳມັນໃຫຍ່ຢູ່ດົງຈອງ ກໍມີຄວາມຈຳເປັນເພື່ອເກັບສະສົມນ້ຳມັນ ແລະ ຮອງຮັບສະຖານະການຕ່າງໆ. ການນຳເຂົ້ານ້ຳມັນເຊື້ອໄຟ ແລະ ວັດຖຸອຸປະກອນຕ່າງໆ ຈາກ ສສສ ໂຊວຽດ ຜ່ານທ່າເຮືອຫວຽດນາມ ແລະ ຜ່ານທາງເລກ 9 ເຂົ້າຫາແຂວງສະຫວັນນະເຂດ, ໃນໄລຍະນັ້ນ ການຂົນສົ່ງ ກໍຍັງພົບຄວາມຫຍຸ້ງຍາກຫລາຍສົມຄວນ ເພາະວ່າຂົວ ແລະ ທາງຕາມທາງເລກ 9 ຍັງບໍ່ທັນໄດ້ມາດຕະຖານດີເທົ່າທີ່ຄວນ.

ກະຊວງວັດຖຸ-ເຕັກນິກເປັນກະຊວງໜຶ່ງທີ່ຮັບຜິດຊອບດ້ານການສະໜອງວັດສະດຸ, ກົນຈັກທີ່ນຳເຂົ້າຈາກ ສສສໂຊວຽດ ແລະ ບັນດາປະເທດຕາເວັນອອກເປັນສ່ວນໃຫຍ່ ຊຶ່ງໄດ້ນຳແບ່ງປັນແຈກຢາຍໃຫ້ບັນດາກະຊວງອົງການຢູ່ຂັ້ນສູນກາງ ແລະ ແຈກຢາຍໃຫ້ບັນດາແຂວງ ແລະ ທ້ອງຖິ່ນຕ່າງໆຕາມ ໂຄງການທີ່ໄດ້ອະນຸມັດແລ້ວ. ຫລັງຈາກສ້າງຕັ້ງມາໄດ້ 5 ປີ, ສະພາບການຂອງກະຊວງສະໜອງວັດ

# ໂຄງຮ່າງການຈັດຕັ້ງ ກະຊວງ ສະໜອງວັດຖຸ-ເຕັກນິກ

**ທ່ານ ທອງສຸກ ສາຍສັງຄີ**
ວ່າການລັດຖະມົນຕີ
(1982-1984)

- **ທ່ານ ອິນ ແກ້ວສະຫວ່າງ**
  ຮອງລັດຖະມົນຕີ
  (1982-1986)
- **ທ່ານ ທອງສະຫວາດ ປະເສີດ**
  ຮອງລັດຖະມົນຕີ
  (1982-1986)
- **ທ່ານ ສຸລິວົງ ດາລາວົງ**
  ຮອງລັດຖະມົນຕີ
  (1982-1986)

Under **ທ່ານ ທອງສະຫວາດ ປະເສີດ**:

- ຫ້ອງການກະຊວງ — **ທ່ານ ວົງສະຫວັນ ບຸດສະຫວັດ**
- ກົມຈັດຕັ້ງ — **ທ່ານ ທອງສິງ ບຸດປະເສີດ**
- ກົມສະໜອງວັດຖຸ ກໍ່ສ້າງ — **ທ່ານ ຄຳມ່ວງ ລາດ ສະຫວັດດີ ບຸດປະເສີດ**
- ກົມນ້ຳມັນເຊື້ອໄຟ — **ທ່ານ ສົມບູນ ຣາຊສົມບັດ**
- ກົມກໍ່ສ້າງພື້ນຖານ — **ທ່ານ ບົວໄລ ສຸກອາລຸນ**
- ກົມແຜນການ — **ທ່ານ ນ. ອຳພອນ ນາລີ ແກ້ວລາ**

- ກົມພົວພັນ ຕ່າງປະເທດ — **ທ່ານ ທອງເຫຼືອ ສຸດທະວີໄລ**
- ກົມກຳໜົດໝາຍ — **ທ່ານ ຄຳຫຼ້າ ໄຊຍະວົງສາ**
- ກົມສະໜອງ ອຸປະກອນເຕັກນິກ — **ທ່ານ ບຸນລັ່ງ ປອນສະຫວັນ**
- ກົມສະໜອງວັດຖຸ ດິບແລະວັດຖຸອື່ນໆ — **ທ່ານ ສົມສັກ**
- ກົມ ບັນຊີ — **ທ່ານ ທອງແດງ ສິງທິລາດ**
- ກົມຄຸ້ມຄອງ — **ທ່ານ ນ. ຄຳຜາຍ ສີສຸລາດ**

- ກົມສະໜອງອຸປະກອນເຕັກນິກ ໃຫ້ກະຊວງວັດທະນະທຳ — **ທ່ານ ນົງ ພູມສະຫວັນ**
- ກົມຂົນສົ່ງນ້ຳມັນ — **ທ່ານ ຊຽງອິນ**
- ກົມ ກົນຈັກ — **ທ່ານ**
- ກົມສະໜອງອຸປະກອນເຕັກນິກ ໃຫ້ກະຊວງກໍ່ສ້າງ — **ທ່ານ ລິນແສງ ດວງສະຫວັນ**

- ບໍລິສັດ ນ້ຳມັນ ເຊື້ອໄຟ — **ທ່ານ ຫຼຸຍ ສີສຸລາດ**
- ກອງ 78 — **ທ່ານ ຊຽງເພັງ**
- ສາງດານັງ — **ທ່ານ ຄຳຝັ້ນ**
- ສາງຫຼັກ 7 — **ທ່ານ ເພັດ**
- ບໍລິສັດ ສະໜອງ ວັດຖຸກໍ່ສ້າງ — **ທ່ານ ສີປະເສີດ**

ຖຸ-ເຕັກນິກໄດ້ມີການທັນປ່ຽນ ຊຶ່ງລັດຖະບານໄດ້ຕົກລົງໃຫ້ຫຍຸບກະຊວງດັ່ງກ່າວ ໂດຍໄດ້ຕົກລົງສັບຊ້ອນການນໍາຂອງກະຊວງພ້ອມດ້ວຍພະນັກງານໃຫ້ໄປສັງກັດຢູ່ກະຊວງຕ່າງໆ ເປັນຕົ້ນກະຊວງກໍ່ສ້າງ, ກະຊວງຂົນສົ່ງ ແລະ ໄປສະນີ, ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ຂະແໜງການອື່ນ.

**II ຂ.3 ກະຊວງຂົນສົ່ງ ແລະ ໄປສະນີ**

ກະຊວງຂົນສົ່ງ ແລະ ໄປສະນີ (1982-89) ປະກອບດ້ວຍຄະນະພັກ, ຄະນະນໍາຂອງກະຊວງ ໂດຍມີ ທ່ານ ເພົ້າ ບຸນນະຜົນ ເປັນລັດຖະມົນຕີວ່າການ ແລະ ຮອງລັດຖະມົນຕີຈໍານວນໜຶ່ງ ທີ່ໃຫ້ການຊີ້ນໍາ ນໍາພາວຽກງານລວມຂອງກະຊວງຕະຫລອດໄລຍະ 7 ປີ.

ໂຄງປະກອບການຈັດຕັ້ງຂອງກະຊວງ ຂົນສົ່ງ ແລະ ໄປສະນີ (1982-89) ປະກອບດ້ວຍ 1 ຫ້ອງການ,1 ໂຮງຮຽນຄົມມະນາຄົມ 10 ກົມ (ກົມຈັດຕັ້ງ, ກົມແຜນການ, ກົມກໍ່ສ້າງພື້ນຖານ, ກົມການເງິນ, , ກົມເຕັກນິກກໍ່ສ້າງ, , ກົມຂົນສົ່ງ, ກົມຄຸ້ມຄອງຂົວທາງ, ກົມຄົມມະນາຄົມ, ກົມໄປສະນີ ແລະ ກົມໂທລະຄົມ).

ກະຊວງຂົນສົ່ງ ແລະ ໄປສະນີ 1 ມີໜ້າທີ່ຕົ້ນຕໍ ສໍາຫລັບແຜນການ 5 ປີ ຄັ້ງທີ I ດັ່ງນີ້ :

- ປັບປຸງແລະກໍ່ສ້າງລະບົບຄົມມະນາຄົມຂົນສົ່ງພາຍໃນປະເທດ ໂດຍສະເພາະແມ່ນການຍົກລະດັບເສັ້ນທາງເລກ 9, ເລກ 8 ອອກສູ່ທະເລ, ເຮັດໃຫ້ທາງເລກ 1 ຈອດກັບເລກທີ 13 ລົງຮອດຊາຍແດນກໍາປູເຈັຍ, ແລ້ວກໍໄດ້ສ້ອມແປງທາງເລກ 7, ເລກ 6, ເລກ 42 ແລະ ເລກ 23 ແລະ ສາຍທາງນໍ້າ.
- ເພີ່ມທະວີກໍາລັງຄວາມສາມາດຂົນສົ່ງ ແລະ ຍົກສະມັດຕະພາບຂອງວຽກງານຂົນສົ່ງທາງລົດ, ທາງເຮືອ, ທາງອາກາດ ແລະ ການຂົນສົ່ງດ້ວຍພາຫະນະພື້ນເມືອງ, ຍົກສູງຄວາມຮັບຜິດຊອບຂອງອົງການຂົນສົ່ງ, ຜູ້ຈັດສົ່ງ, ອົງການສະໜອງ ແລະ ຈໍາໜ່າຍສິນຄ້າ, ວາງແຜນການຂົນສົ່ງໃຫ້ເໝາະສົມ, ປະສານສົມທົບລະຫວ່າງການຂົນສົ່ງທາງລົດ ແລະ ການຂົນສົ່ງທາງນໍ້າ ແລະ ຊຸກຍູ້ການກໍ່ສ້າງພະນັກງານວິຊາສະເພາະດ້ານການຂົນສົ່ງ.
- ນໍາໃຊ້ທຸກພາຫະນະຂົນສົ່ງທາງນໍ້າເພື່ອຂົນສົ່ງສິນຄ້າ ແລະ ຜູ້ໂດຍສານ ແນໃສ່ເພີ່ມທະວີຄວາມສາມາດດ້ານການຂົນສົ່ງທາງນໍ້າ ໂດຍສະເພາະແມ່ນການຂົນສົ່ງຕາມລໍາແມ່ນໍ້າຂອງຕິດຕໍ່ລະ ຫວ່າງພາກເໜືອ ແລະ ພາກໄຕ້ ພ້ອມທັງຕິດຕໍ່ພົວພັນຊື້ຂາຍກັບຕ່າງປະເທດ ໂດຍຜ່ານກໍາປູເຈັຍຕາມເສັ້ນທາງສົມທົບສາຍນໍ້າ-ທະເລ.
- ສໍາຫລັບການຂົນສົ່ງທາງອາກາດແມ່ນໃຫ້ຈັດຕັ້ງສາຍການບິນປະຈໍາຂຶ້ນຕື່ມບ່ອນທີ່ມີຄົນຫລາຍ ແລະ ບ່ອນທີ່ຫ່າງໄກສອກຫລີກ ແລະ ເພີ່ມທະວີພື້ນຖານວັດຖຸ ເຕັກນິກແກ່ການບິນພົນລະເຮືອນ.
- ຮັບປະກັນການຕິດຕໍ່ພົວພັນຢ່າງສະໝໍ່າສະເໝີລະຫວ່າງສູນກາງກັບແຂວງ, ລະຫວ່າງສູນກາງ ແລະ ແຂວງກັບອົງການຂົນສົ່ງສໍາຄັນ (ສາງຕົ້ນທາງ, ສາງພະລາທິການ ແລະ ການຄ້າສູນກາງ); ຮັບປະກັນການປະຕິບັດໜ້າທີ່ກ່ຽວກັບການຂະຫຍາຍການຕິດຕໍ່ພົວພັນທຸກປະເພດ ແລະ ຮັບ

# ໂຄງຮ່າງການຈັດຕັ້ງ ກະຊວງ ຂົນສົ່ງ ແລະ ໄປສະນີ

**ທ່ານ ເພົ້າ ບຸນນະຜົນ**
ລັດຖະມົນຕີວ່າການ
(1982-1988)

**ທ່ານ ບົວສີ ລໍວັນໄຊ**
ຮອງລັດຖະມົນຕີ
(1982-1988)

**ທ່ານ ຄຳລວດ ສິດລາກອນ**
ຮອງລັດຖະມົນຕີ
(1982-1984)

**ທ່ານ ອຸ່ຍ ສຸມົນທາ**
ຮອງລັດຖະມົນຕີ
(1982-1988)

**ທ່ານ ໄຊ ພະກະຊຸມ**
ຮອງລັດຖະມົນຕີ
(1982-1984)

**ທ່ານ ຄຳເຫຼືອງ ໄຊຍະລາດ**
ຮອງລັດຖະມົນຕີ
(1982-1984)

ຫ້ອງການ
**ທ່ານ ສີທອງ ບົວພາ**

ກົມຈັດຕັ້ງ
**ທ່ານ ກ້ຽງ ຄຳເກດ**

ກົມແຜນການ
**ທ່ານ ທີມມະກອນ ມະໂນທັມ**

ກົມກໍ່ສ້າງພື້ນຖານ
**ທ່ານ ດາລາ ວົງວິຈິດ**

ກົມ ເຕັກນິກກໍ່ສ້າງ
**ທ່ານ ອຸ່ນເຮືອນ ວິໄລພອນ**

ກົມການເງິນ
**ທ່ານ ຄຳແຫວນ ອິນເທພາ**

ກົມຂົນສົ່ງ
**ທ່ານ ຄຳຫຼ້າ ວິສີສົມບັດ**

ກົມຄຸ້ມຄອງຂົວທາງ
**ທ່ານ ມັດ ສູນມາລາ**

ກົມຄົມມະນາຄົມ
**ທ່ານ ບົວໄລ ສຸກອາລຸນ**

ກົມໄປສະນີ
**ທ່ານ ດົມ ວົງສາລີ**

ກົມໂທລະຄົມ
**ທ່ານ ໂສລີ ສີສົມນຶກ**

ໂຮງຮຽນ ຄົມມະນາຄົມ
**ທ່ານ ດາວເພັດ ບົວພາ**

ປະກັນລາຍຮັບເຂົ້າງົບປະມານ; ເປີດກວ້າງການບໍລິການທາງໄປສະນີ, ໂທລະສັບ ແລະ ໂທລະຄົມ ມະນາຄົມ ໄປພ້ອມກັບການຍົກສູງຄຸນນະພາບໃນການຮັບໃຊ້ການຜະລິດ ແລະ ປະຊາຊົນພ້ອມທັງ
ເປີດກວ້າງລະບົບວິທະຍຸກະຈາຍສຽງ ແລະ ເພີ່ມທະວີສະຖານີຕິດຕໍ່ທາງໂທລະສັບຂຶ້ນຕື່ມ ແລະ ປັບ ປຸງວຽກງານຈັດສົ່ງໜັງສືພິມ ແລະ ເອກະສານອື່ນໆ.

ໃນໄລຍະນີ້ ພັກ ແລະ ລັດໄດ້ຍາດແຍ່ງເອົາການຊ່ວຍເຫລືອຈາກປະທດສັງຄົມນິຍົມເພື່ອນມິດໃນການປັບປຸງ ແລະ ກໍ່ສ້າງຂົວທາງດັ່ງນີ້ :

- ສ ສ ສ ໂຊວຽດ ໄດ້ຊ່ວຍເຫລືອກໍ່ສ້າງທາງເລກ 9 ແລະ ຂົວນ້ອຍ-ກາງ 10 ແຫ່ງ ຕາມເສັ້ນທາງເລກ 9, ຂົວໃຫຍ່ 5 ແຫ່ງ (ເຊໂດນ, ນໍ້າງື່ມ, ນ້ຳກະດິງ, ເຊບັງໜຽງ ແລະ ນໍ້າເງິນ);
- ສ ສ ຫວຽດນາມໄດ້ຊ່ວຍກໍ່ສ້າງທາງເລກ 9 ໄດ້ 44 ກມ, ຂົວນ້ອຍ ແລະ ກາງຈຳນວນ 17ແຫ່ງຕາມເສັ້ນທາງເລກ 9; ກໍ່ສ້າງທາງເລກ 7 ໂພນສະຫວັນ-ນໍ້າກັ່ນ ແລະ ຂົວ 8ແຫ່ງ, ຍົກລະດັບທາງເລກ 6 ດ້ວຍການປູຢາງ (ພູເລົາ ຫາ ເມືອງຮ້ຽມ) ແລະ ຂົວ 5 ແຫ່ງ, ຍົກລະດັບທາງເລກ 8 ດ້ວຍການປູຢາງ (ພູໄຊ ຫາ ຊາຍແດນລາວ-ຫວຽດ) ແລະ ຂົວ 6 ແຫ່ງ;
- ປະເທດເຊັກໂກສະໂລວາກີ ກໍໄດ້ໃຫ້ການຊ່ວຍເຫລືອກໍ່ສ້າງຂົວໃຫຍ່ 2 ແຫ່ງຕາເສັ້ນທາງ ເລກ 9 ຂົວນ້ອຍ 1 ແຫ່ງ ຕາມທາງເລກທີ 23; ສປ ບູນກາລີ ຊ່ວຍກໍ່ສ້າງຂົວ 1 ແຫ່ງຕາມເສັ້ນທາງເລກ 9 ແລະ ສປ ຈີນ ຊ່ວຍກໍ່ສ້າງເສັ້ນທາງເລກ 1, 2, 3 ແລະ ຢູ່ພາກ

  ເໜືອພ້ອມດ້ວຍຂົວນ້ອຍ, ກາງ ແລະ ໃຫຍ່ ຈຳນວນ 57 ແຫ່ງ.

ຈາກການປັບປຸງເສັ້ນທາງ ແລະ ຂົວດັ່ງກ່າວນີ້ ໄດ້ເຮັດໃຫ້ການຄົມມະນາຄົມຂົນສົ່ງກໍຄືການຈໍລະຈອນແຈກຢາຍລວມທັງການໄປມາຫາສູ່ຂອງປະຊາຊົນດີຂຶ້ນຕື່ມບາດກ້າວໜຶ່ງ. ໃນ 1989 ເສັ້ນທາງເລກທີ 13 ແຕ່ຫລວງພະບາງຫາຊາຍແດນກຳປູເຈັຍ ກໍສາມາດຮັບປະກັນການຄົມມະນາຄົມໄດ້ທັງສອງລະດູການ. ເສັ້ນທາງຄົມມະນາຄົມທາງນໍ້າຕາມລຳແມ່ນໍ້າຂອງແຕ່ຊາຍແດນຈີນຫາວຽງຈັນກໍໄດ້ຮັບການປັບປຸງໃຫ້ນຳໃຊ້ໄດ້ດີຕື່ມຊຶ່ງເປັນການສ້າງປະຫວັດສາດໃນການເດີນເຮືອ. ເວົ້າລວມ ການຂົນສົ່ງທາງບົກ ທາງນໍ້າກໍໄດ້ມີປັດໃນໃໝ່ ເຮັດໃຫ້ບໍລິມາດຂົນສົ່ງທາງບົກ ແລະທາງນໍ້າເພີ່ມຂຶ້ນໃນລະດັບ 5-8% ຕໍ່ປີ. ລັດໄດ້ສ້າງຕັ້ງບໍລິສັດຂົນສົ່ງທາງບົກຂຶ້ນ ມີບໍລິສັດເລກ 1, 2 ແລະ 3 ແລະ ກອງຂົນ ສົ່ງຈຳນວນໜຶ່ງ ເພື່ອຮັບປະກັນການຂົນສົ່ງສິນຄ້າຜ່ານແດນຂາເຂົ້າ-ຂາອອກຈາກສາງຊາຍແດນເຂົ້າ ມາລາວຕາມຈຸດຕ່າງໆເປັນຕົ້ນ ທາງເລກ 42 (ເມືອງຂວາ),ທາງເລກ 217 (ຊຳເໜືອ), ທາງເລກ 7 (ຊຽງຂວາງ), ທາງເລກ 8 ແລະ ເລກ 13 (ວຽງຈັນ) ແລະ ທາງເລກ 9 ເມືອງ (ເມືອງພີນ ຫລື ແກ້ງກະເບົາ).